# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 20 ສິງຫາ 2017 (8-20-2017)

# ຄວາມຮ້ອນຮົນໃນການແບ່ງປັນຂ່າວປະເສີດ

*ຫຼັກການໂຄສະນາສິນຄ້າປະເພດໃດ ທີ່ບໍ່ຄ່ອຍດຶງດູດໃຈຂອງທ່ານ?*

**ຈຸດສຳຄັນໃນບົດຮຽນ***:* ພຣະເຈົ້າຮຽກເອີ້ນພວກເຮົາໃຫ້ແບ່ງປັນຂ່າວປະເສີດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ທຸກໆຄົນທີ່ປະດິດສິນຄ້າຫຼືບໍຣິການຮັບໃຊ້ກໍຊອກຫາທາງພິເສດເພື່ອຢາກໃຫ້ຄົນຊື້. ນັ້ນເອີ້ນວ່າການຕລາດ, ແລະມີຫຼາຍທາງແຕກຕ່າງກັນເພື່ອເຮັດໃຫ້ການຊື້ຂາຍເກີດຂຶ້ນ:

- ການຕລາດບຸກຄົນຕໍ່ບຸກຄົນ. ເພື່ອນບອກໝູ່ເພື່ອນຂອງເຂົາເຈົ້າກ່ຽວກັບຂອງທີ່ເຂົາເຈົ້າຫາກໍຊື້ແລະເຫດຜົນວ່າເປັນຫຍັງເຂົາເຈົ້າຈຶ່ງມັກ.
- ການຕລາດແບບແຜ່ຂຍາຍ. ຄົນເຫັນວີດີໂອຫຼືຮູບພາບສິນຄ້າໃນອິນເຕີແນັດແລະເຂົາເຈົ້າໄດ້ແບ່ງປັນຊຶ່ງກັນແລະກັນໂດຍຜ່ານການສື່ສານທາງເທັກໂນໂລຈີແບບໃໝ່.
- ການຕລາດແບບກະຕືລືລົ້ນ. ຄົນທີ່ເປັນດັ່ງນີ້ໄດ້ຂາຍສິນຄ້າຫຼືໂຮງງານທີ່ຜລິດສິ່ງຂອງທີ່ໃຊ້ຫຼືເວົ້າເຖິງເຣື່ອງສິ່ງຂອງນັ້ນ. (ຍົກຕົວຢ່າງ ຮູ້ຈັກໃຜບໍ່ທີ່ "ກະຕືລືລົ້ນ" ສຳລັບ ໄອໂຟນ?)

ການບອກຄົນອື່ນກ່ຽວກັບເຣື່ອງພຣະເຢຊູບໍ່ມີສ່ວນກ່ຽວຂ້ອງຫຍັງເລີຍກ່ຽວກັບການຕລາດ, ແຕ່ວ່າສາມາດກ່ຽວພັນກັບການຊັກຊວນ. ໃນ 2 ໂກຣິນໂທ 5, ອັຄສາວົກໂປໂລໄດ້ຂຽນເຖິງການຊັກຊວນຄົນອື່ນໆ; ເປົ້າໝາຍຂອງເພິ່ນນັ້ນແມ່ນສິ່ງທີ່ໄດ້ຊັກຊວນເພິ່ນໃຫ້ແບ່ງປັນເຣື່ອງພຣະຄຣິດກັບຄົນອື່ນໆ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**<u>ການສຶກສາພຣະຄັມພີ</u>**

**1. <u>2 ໂກຣິນໂທ 5:11</u>**

*11 ເພາະເຫດທີ່ເຮົາຮູ້ຈັກຄວາມຢຳເກງອົງພຣະຜູ້ເປັນເຈົ້າແລ້ວ, ເຮົາຈຶ່ງຊັກຊວນຄົນທັງຫຼາຍ. ເຮົາເປັນຢ່າງໃດພຣະເຈົ້າກໍຊົງຊາບຢູ່ແລ້ວ, ແລະເຮົາຫວັງໃຈວ່າ ໃຈສຳນຶກຜິດແລະຊອບຂອງພວກເຈົ້າຄົງຮູ້ຈັກເຮົາເໝືອນກັນ.*

ທ່ານອາດຈະໄດ້ເຫັນປ້າຍໂຄສະນາທີ່ມີການຊັກຊວນຢ່າງນັບບໍ່ຖ້ວນມາແລ້ວທີ່ໄດ້ຫ້ອຍຢູ່ສະຖານທີ່ທຸຣະກິດຕ່າງໆ ແລະໃນຫ້ອງການທັງຫຼາຍ; ພາບທີ່ປລາດແລະມີຄຳຂວັນທີ່ຍຸຍົງທີ່ມີຄວາມໝາຍໃນການກະຕຸ້ນຈິດໃຈແລະຊັກຊວນໃຫ້ເປັນພະນັກງານທີ່ເຮັດວຽກໜັກກວ່າເກົ່າ ຫຼືເປັນຄົນທີ່ດີກວ່າເກົ່າ. ໃບໂຄສະນາແນວນັ້ນອາດຈະກໍ່ໃຫ້ເກີດຄວາມຄິດທີ່ດີ, ແຕ່ວ່າມັນຊັກຊວນພວກເຮົາຢ່າງແທ້ຈິງຫຼືບໍ່?

ການຊັກຊວນຂັບເຄື່ອນທຸກສິ່ງທີ່ພວກເຮົາເຮັດນັ້ນ. ນັກຈິດຕະສາດໄດ້ໃຫ້ຄຳອະທິບາຍການຊັກຊວນໄດ້ສອງຄຳດັ່ງນີ້: ຈາກສິ່ງພາຍນອກ ແລະຈາກສິ່ງພາຍໃນ.

1. **ການຊັກຊວນຈາກສິ່ງພາຍນອກ** ແມ່ນສິ່ງທີ່ເຮັດໃຫ້ພວກເຮົາລົງມືເຮັດບາງຢ່າງເພື່ອຢາກໄດ້ຜົນປໂຍດຂອງ

ພາຍນອກເພີ່ມຂຶ້ນ, ດັ່ງເຊັ່ນການຕື່ນນອນແຕ່ 4:30 ຕອນເຊົ້າເພື່ອສົ່ງໜັງສືພິມເພາະວ່າທ່ານຕ້ອງການເງິນເພີ້ມ.

2. **ການຊັກຊວນຈາກສິ່ງພາຍໃນ** ແມ່ນການກະຕຸ້ນພວກເຮົາໃຫ້ເຮັດບາງຢ່າງທີ່ເພິ່ງພໍໃຈທາງພາຍໃນ, ໂດຍປາສຈາກຄວາມຕ້ອງການຈາກຜູ້ໃດຜູ້ນຶ່ງທັງສິ້ນ ດັ່ງການທີ່ມາປາກົດຕົວທຸກໆວັນອາທິດເພື່ອຂົນຕັ່ງລົງຈາກຣົດແກ່ເຄື່ອງແລະຈັດຕັ້ງຕັ່ງ ເພື່ອໂບດຂອງທ່ານຈະສາມາດມີປະຊຸມກັນໄດ້ທີ່ຫ້ອງກິນເຂົ້າຂອງໂຮງຮຽນທີ່ທ່ານໄດ້ເຊົ່າໄວ້ນັ້ນ.

ແມ່ນຫຍັງທີ່ຊັກຊວນພວກເຮົາໃຫ້ແບ່ງປັນຂ່າວປະເສີດກັບຄົນອື່ນໆ? ທ່ານໂປໂລໄດ້ຊີ້ໃຫ້ເຫັນການຊັກຊວນພາຍໃນ: "ທີ່ເຮົາຮູ້ຈັກຄວາມຢຳເກງອົງພຣະຜູ້ເປັນເຈົ້າແລ້ວ, ເຮົາຈຶ່ງຊັກຊວນຄົນທັງຫຼາຍ" ທ່ານໂປໂລບໍ່ໄດ້ເລັງເຖິງຄວາມຢ້ານກົວທີ່ພວກກໍ່ການຮ້າຍໄດ້ເຮັດຂຶ້ນ; ຫຼືບໍ່ແມ່ນຈຸດທີ່ທ່ານໄດ້ຊີ້ເຖິງປະເພດທີ່ກ່ຽວພັນກັບຄວາມຢ້ານກົວ, ດັ່ງເຊັ່ນການຢ້ານງູ (ຫຼືຕົວຕລົກ). ທ່ານໂປໂລເວົ້າກ່ຽວກັບຄວາມຢ້ານທີ່ພຸ່ງຂຶ້ນຈາກສ່ວນເລິກໃນການນັບຖືແລະຄວາມເກງຂາມ ຢ້ານຢຳ.

ຄວາມຢ້ານຢຳອັນສັດຈິງນີ້ ຄວາມເລິກເຊິ່ງແລະການນັບຖືໃນຄວາມຮັກອັນນີ້ ໄດ້ຊັກຊວນທ່ານໂປໂລໃຫ້ດຳລົງຊີວິດໃນທາງທີ່ຈະໃຫ້ກຽດພຣະຄຣິດ. ຄວາມຢ້ານຢຳອັນດຽວກັນນີ້ຄວນຈະຊັກຊວນພວກເຮົາໃຫ້ດຳເນີນຊີວິດແບບດຽວກັນຂນະທີ່ພວກເຮົາ "ພະຍາຍາມຊັກຊວນຄົນ" ກ່ຽວເຣື່ອງຂ່າວປະເສີດ.

| |
|---|
| ແມ່ນຫຍັງທີ່ເຂົ້າມາໃນສມອງເມື່ອທ່ານຄິດເຖິງການຊັກຊວນຄົນອື່ນໆໃຫ້ຕິດຕາມພຣະຄຣິດ? |

## 2. <u>2 ໂກຣິນໂທ 5:14-17</u>

*[14] ດ້ວຍວ່າຄວາມຮັກຂອງພຣະຄຣິດຊົງບັງຄັບເຮົາຢູ່ ເພາະເຮົາໄດ້ຄິດເຫັນຢ່າງນີ້ວ່າ ມີຜູ້ນຶ່ງໄດ້ຕາຍແທນຄົນທັງປວງ ເຫດດັ່ງນັ້ນຄົນທັງປວງນັ້ນຈຶ່ງໄດ້ເຂົ້າສ່ວນໃນຄວາມຕາຍນັ້ນ. [15] ແລະພຣະອົງນັ້ນໄດ້ຊົງວາຍພຣະຊົນແທນຄົນທັງປວງ ເພື່ອຄົນທັງຫຼາຍຜູ້ທີ່ມີຊີວິດຢູ່ນັ້ນຈະໄດ້ມີຊີວິດເພື່ອປໂຍດແກ່ຕົວເອງອີກຕໍ່ໄປ ແຕ່ຈະມີຊີວິດຢູ່ເພື່ອພຣະອົງຜູ້ຊົງສິ້ນພຣະຊົນ ແລະໄດ້ຊົງຖືກບັນດານໃຫ້ຄືນພຣະຊົນເພາະເຫັນແກ່ເຂົາ [16] ເຫດສັນນັ້ນ ແຕ່ນີ້ຕໍ່ໄປເຮົາຈະບໍ່ສັງເກດຮູ້ຜູ້ໃດຕາມມາດຕະຖານຂອງມະນຸດ ເຖິງແມ່ນເມື່ອກ່ອນ ເຮົາໄດ້ສັງເກດຮູ້ພຣະຄຣິດຕາມມາດຕະຖານຂອງມະນຸດກໍຕາມ ແຕ່ດຽວນີ້ເຮົາກໍບໍ່ສັງເກດຮູ້ພຣະອົງຢ່າງນັ້ນອີກ. [17] ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃໝ່ແລ້ວ ຖານະເກົ່າເຫຼົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃໝ່ທັງນັ້ນ!*

| |
|---|
| ແມ່ນຫຍັງຄືຄວາມຈິງພື້ນຖານຂອງຂ່າວປະເສີດ ທີ່ທຸກຄົນຢາກຟັງ? |

ຄວາມຮັກບັງຄັບພວກເຮົາໃຫ້ເຮັດສິ່ງທີ່ປະເສີດ ດັ່ງເຊັ່ນປະກາດຂ່າວດີຂອງພຣະຄຣິດກັບຜູ້ທີ່ຕ້ອງການຢາກຟັງ. ຄວາມຈິງຫຼາຍຢ່າງທີ່ພົບຢູ່ໃນພຣະຄຳວັກນີ້ທີ່ເປັນສ່ວນນຶ່ງຂອງຄຳສັ່ງສອນທີ່ທ່ານໂປໂລໄດ້ຖືກບັງຄັບໃຫ້ແບ່ງປັນ:

- **ພຣະຄຣິດຕາຍແທນຄົນທັງປວງ (ຂໍ້14-15).** ພວກເຮົາທຸກຄົນເປັນຄົນຜິດຄົນບາບ. ຄ່າຈ້າງຂອງການພາດພັ້ງຕໍ່ການດຳເນີນຊີວິດໃນການເຊື່ອຟັງພຣະເຈົ້າທັງໝົດນັ້ນກໍຄືຄວາມຕາຍ (ເບິ່ງ ໂຣມ 3:23;6:23), ແຕ່ວ່າພຣະເຢຊູໄດ້ເອົາຄວາມຕາຍທີ່ພວກເຮົາສົມຄວນຈະໄດ້ຮັບນັ້ນໃສ່ຕົວພຣະອົງເອງຢ່າງເຕັມໃຈ. (ເບິ່ງເຮັບເຣີ 2:9).
- **ພຣະຄຣິດໄດ້ຟື້ນຄືນຈາກຄວາມຕາຍແທນຄົນທັງປວງ (ຂໍ້ 15).** ພຣະເຈົ້າໄດ້ເຮັດໃຫ້ພຣະເຢຊູຟື້ນຄືນຈາກຕາຍ, ແລະໃຜກໍຕາມທີ່ເຊື່ອແລະວາງໃຈໃນພຣະເຢຊູຈະໄດ້ຮັບຊີວິດຕລອດໄປເປັນນິດ (ຢຮ 11:25-26;ໂຣມ 6:5-9).

- **ພວກເຮົາສາມາດຢູ່ເພື່ອພຣະຄຣິດ (ຂໍ້ 15).** ພຣະຄຣິດມາສະຖິດຢູ່ກັບຜູ້ທີ່ຕິດຕາມພຣະອົງ; ພວກເຮົາບໍ່ຢູ່ດ້ວຍຕົວພວກເຮົາເອງ, ແຕ່ວ່າພຣະອົງປະທານພຣະວິນຍານຂອງພຣະອົງເພື່ອຊ່ວຍພວກເຮົາໃຫ້ດໍາເນີນຊີວິດແລະນໍາພຣະກຽດມາສູ່ພຣະອົງ (ເບິ່ງ ໂຣມ 8:14-17).
- **ພວກເຮົາຖືກສ້າງຂຶ້ນໃໝ່ໃນພຣະຄຣິດ (ຂໍ້ 17).** ພຣະເຢຊູບໍ່ພຽງແຕ່ຍົກຍ້າຍຄວາມຜິດບາບຂອງພວກເຮົາເທົ່ານັ້ນ; ແຕ່ພຣະອົງປະທານຊີວິດໃໝ່ແກ່ພວກເຮົານໍາ (ເບິ່ງ ເອເຟໂຊ 2:10).

ການແບ່ງປັນຂ່າວປະເສີດຂອງພຣະເຢຊູບໍ່ແມ່ນກິຈການຂອງສາສນາຫຼືໜ້າທີ່ ທີ່ລຶບອອກຈາກບັນຊີຂອງທ່ານ. ແທນທີ່ຈະເປັນແນວນັ້ນ, ມັນເປັນທັມມະຊາດຂອງປະສົບການທີ່ລົ້ນເຫຼືອຂອງຄວາມຮັກຂອງພຣະຄຣິດ. ພວກເຮົາເປັນເໝືອນເຮືອທີ່ແຕກໂດຍຄວາມບາບຂອງພວກເຮົາ ແຕ່ພຣະຄຣິດໄດ້ເອົາຄວາມບາບຂອງພວກເຮົາ ແລະຄວາມແຕກຫັກໃສ່ໃນຕົວພຣະອົງເອງ. ພຣະອົງໄດ້ຕາຍສໍາລັບທ່ານແລະຂ້າພະເຈົ້າ "ດັ່ງນັ້ນຜູ້ທີ່ມີຊີວິດຢູ່ນັ້ນ ຈະບໍ່ມີຊີວິດເພື່ອປໂຍດແກ່ຕົວເອງອີກຕໍ່ໄປ ແຕ່ຈະມີຊີວິດຢູ່ເພື່ອພຣະອົງຜູ້ຊົງສິ້ນພຣະຊົນແລະໄດ້ຊົງຖືກບັນດານໃຫ້ຄືນພຣະຊົນເພາະເຫັນແກ່ເຂົາ."

ເພາະເຫດຜົນນັ້ນເອງ, ຈົ່ງແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດຢ່າງກ້າຫານ! ປະກາດຂ່າວດີເພາະວ່າຍ້ອນຄວາມຮັກຂອງພຣະຄຣິດ ທີ່ບັງຄັບທ່ານ.

| ຄວາມຮັກຂອງພຣະຄຣິດປ່ຽນທັສນະຂອງພວກເຮົາຕໍ່ໂລກແລະຄົນທີ່ພວກເຮົາພົບພໍ້ຢ່າງໃດ? |
|---|

## 3. 2 ໂກຣິນໂທ 5:18-21

*[18] ສິ່ງທັງປວງນີ້ເກີດມາຈາກພຣະເຈົ້າ ຜູ້ຊົງໂຜດໃຫ້ເຮົາຄືນດີກັບພຣະອົງທາງພຣະຄຣິດ ແລະຊົງປະທານໃຫ້ເຮົາມີໜ້າທີ່ປະຕິບັດໃນການຄືນດີນັ້ນ. [19] ຄືພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະຄຣິດ ໄດ້ຊົງກະທໍາໃຫ້ມະນຸດຄືນດີກັນກັບ ພຣະອົງ ບໍ່ໄດ້ຊົງຖືໂທດໃນການຜິດບາບຂອງເຂົາ ແລະຊົງມອບຂ່າວເຣື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາ. [20] ເຫດສັນນັ້ນເຮົາຈຶ່ງເປັນທູດຂອງພຣະຄຣິດ ໂດຍທີ່ພຣະເຈົ້າຊົງຂໍຮ້ອງເຈົ້າທັງຫຼາຍທາງເຮົາ ເຮົາຈຶ່ງຂໍຮ້ອງພວກເຈົ້າໃນນາມຂອງພຣະຄຣິດວ່າ "ຈົ່ງຍອມໃຫ້ພຣະເຈົ້າຊົງກະທໍາໃຫ້ເຈົ້າຄືນດີກັນກັບພຣະອົງເຖີ້ນ." [21] ເພາະວ່າພຣະເຈົ້າໄດ້ຊົງກະທໍາໃຫ້ພຣະຄຣິດຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ.*

ພວກເຮົາຮູ້ຈັກຈາກຄວາມສໍາພັນຂອງພວກເຮົາເອງທີ່ການຄືນດີກັນແມ່ນຈໍາເປັນ ເມື່ອສອງຄົນມີໂອກາດທີ່ຈະເປັນໄປໄດ້ໃນການຄືນດີຕໍ່ກັນ. ແຕ່ວ່າພວກເຮົາຕ້ອງເຮັດຫຼາຍເກີນກວ່າ "ມີໂອກາດ" ກັບພຣະຜູ້ສ້າງພວກເຮົາ; ພວກເຮົາໄດ້ກະບົດແລະເຮັດໃຫ້ພວກເຮົາເອງເປັນສັດຕຣູຂອງພຣະເຈົ້າ. ຂອບພຣະຄຸນຢ່າງຍິ່ງໃຫຍ່, ພຣະເຈົ້າຈະບໍ່ປະປ່ອຍພວກເຮົາໄວ້ບ່ອນນັ້ນ. "ດ້ວຍວ່າຖ້າເມື່ອເຮົາທັງຫຼາຍຍັງເປັນສັດຕຣູຕໍ່ພຣະເຈົ້າ ພຣະເຈົ້າໄດ້ຊົງໂຜດໃຫ້ພວກເຮົາໄດ້ກັບຄືນດີກັບພຣະອົງ ໂດຍທີ່ພຣະບຸດຂອງພຣະອົງຊົງສິ້ນພຣະຊົນແລ້ວ" (ໂຣມ 5:10). ພວກເຮົາໄດ້ຄືນດີກັບພຣະເຈົ້າແລ້ວ! ອັນນີ້ແມ່ນຂ່າວດີຢ່າງແນ່ນອນ.

ເຖິງປານນັ້ນ, ຍັງມີຄຣິສຕຽນຫຼວງຫຼາຍ, ຕາມຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ຂ່າວປະເສີດແມ່ນຢຸດຢູ່ບ່ອນນັ້ນ. ເຂົາເຈົ້າເຫັນຜົນປໂຍດຂອງຂ່າວປະເສີດສໍາລັບຕົວເຂົາເຈົ້າເອງເທົ່ານັ້ນ, ເຂົາເຈົ້າເບິ່ງບໍ່ເຫັນບ່ອນທີ່ຖືກຊີ້ແຈງ ດ້ວຍການແບ່ງປັນໂອກາດອັນນີ້ສໍາລັບການຄືນດີກັນ. ນັ້ນແມ່ນວຽກງານຮັບໃຊ້ຂອງພວກເຮົາ.

ເພາະງານຮັບໃຊ້ອັນນີ້, ທ່ານໂປໂລໄດ້ຮຽກເອີ້ນພວກເຮົາໃຫ້ເປັນທູດເພື່ອພຣະຄຣິດ. ຫຼັກການຮັບໃຊ້ຂອງການເປັນທູດບໍ່ເຄີຍປ່ຽນແປງຕັ້ງແຕ່ສມັຍຂອງທ່ານໂປໂລ. ກ່າວຄື, ທູດກໍແມ່ນຜູ້ຕາງໜ້າປະເທດຂອງຕົນໃນປະເທດອື່ນ. ເມື່ອທູດຂອງສະຫະຣັດອະເມຣິກາເວົ້າຕໍ່ຣັຖບານຂອງຕ່າງປະເທດ, ແມ່ນການເວົ້າຂອງປະເທດສະຫະຣັດອະເມຣິກາ.

ໃນທຳນອງດຽວກັນ, ພວກເຮົາຕາງໜ້າໃຫ້ພຣະເຢຊູ. ພວກເຮົາເປັນຜູ້ຕາງໜ້າພຣະເຢຊູກະສັດໃນຣາຊວັງທີ່ບໍ່ແມ່ນເຮືອນແທ້ຂອງພວກເຮົາ, ໝາຍຄວາມວ່າເຮົາຕ້ອງດຳເນີນຊີວິດໃນທາງທີ່ເໝາະສົມເມື່ອຄົນເຫັນພວກເຮົາ, ເຂົາເຈົ້າຈະເຫັນພຣະເຢຊູ. ໃນຖານະເປັນທູດຂອງພຣະຄຣິດ, ຄຳເວົ້າຂອງພວກເຮົາ ຖືກຫຼືຜິດ ແມ່ນການສະທ້ອນຕໍ່ພຣະອົງ. ດັ່ງນັ້ນທ່ານໂປໂລຈຶ່ງເວົ້າວ່າ, “ພຣະເຈົ້າເປີດເຜີຍຕົວເອງໂດຍຜ່ານພວກເຮົາ.”

ແຜນການໄຖ່ມະນຸສໂລກຂອງພຣະເຈົ້າແມ່ນຮວມທັງທ່ານແລະຂ້າພະເຈົ້າ. ຖ້າວ່າທ່ານເປັນຜູ້ຕິດຕາມພຣະຄຣິດ, ພຣະເຈົ້າໄດ້ປະທານການຮັບໃຊ້ໃນການຄືນດີກັບພຣະອົງໃຫ້ແກ່ທ່ານ. ຖ້າວ່າທ່ານເປັນຄົນທີ່ຊົງສ້າງຂຶ້ນໃໝ່ໃນພຣະຄຣິດແລ້ວ, ພຣະເຈົ້າໄດ້ບັນຊາທ່ານໃຫ້ແບ່ງປັນຄຳສັ່ງອັນດຽວກັນຂອງການຄືນດີກັບພຣະເຈົ້າໃຫ້ກັບຄົນອື່ນ (ເບິ່ງ ມັດທາຍ 28:18-20; ກິຈການ 1:8). ທ່ານເປັນທູດຂອງພຣະຄຣິດ, ແລະພຣະເຈົ້າຕ້ອງການທີ່ຈະໃຊ້ທ່ານໃຫ້ແບ່ງປັນຂ່າວປະເສີດກັບຄົນອື່ນໆ.

ດັ່ງນັ້ນຈົ່ງໄປ, ແບ່ງປັນກັບຄົນອື່ນໃນສິ່ງທີ່ພຣະເຈົ້າໄດ້ກະທຳໃນຊີວິດຂອງທ່ານ. ຈົ່ງເວົ້າກ່ຽວກັບຊີວິດຂອງທ່ານວ່າເປັນແນວໃດກ່ອນມາຮູ້ກັບພຣະຄຣິດ. ແບ່ງປັນເຖິງແຕ່ກ່ອນນັ້ນຄວາມຕັ້ງໃຈຂອງທ່ານເປັນຢ່າງໃດ ແລະທ່ານເຄີຍຕັດສິນໃຈແນວໃດ. ຫຼັງຈາກນັ້ນກໍເວົ້າກ່ຽວກັບຕອນທີ່ທ່ານສຳນຶກໄດ້ວ່າທາງຂອງທ່ານໃຊ້ການບໍ່ໄດ້. ແບ່ງປັນວ່າທຸກສິ່ງທຸກຢ່າງໄດ້ປ່ຽນແປງເມື່ອທ່ານສາລະພາບຕໍ່ພຣະເຢຊູວ່າພຣະອົງເປັນພຣະເຈົ້າແລະເປັນພຣະຜູ້ໂຜດໃຫ້ພົ້ນ (ເບິ່ງ ໂຣມ 10:9-10).

ເປັນທູດຂອງພຣະຄຣິດແລະນຳເອົາການຮັບໃຊ້ຂອງການຄືນດີກັບພຣະເຈົ້າ. “ພວກເຮົາຂໍຮ້ອງຕາງພຣະຄຣິດ: ‘ຈົ່ງຄືນດີກັບພຣະເຈົ້າ.’” ໃຫ້ພຣະເຈົ້າຈັດການທັງໝົດ.

| |
|---|
| ມີທາງໃດອີກແດ່ທີ່ພວກເຮົາສາມາດຮ່ວມມືໃນວຽກງານ ທີ່ໄດ້ບັນລະຍາຍໃນຂໍ້ພຣະຄັມພີເຫຼົ່ານີ້ |

## ນຳໃຊ້ໃນຊີວິດ

ຂັ້ນຕອນອັນໃດທີ່ທ່ານສາມາດໃຊ້ໃນການແບ່ງປັນຂ່າວປະເສີດໃນອາທິດນີ້? ຂໍສເນີໃຫ້ເຮັດຕາມນີ້:

- ***ເລີ້ມດ້ວຍການອະທິຖານ.*** ເມື່ອທ່ານຕື່ນຈາກນອນໃນຕອນເຊົ້າ, ຄຸເຂົ່າແລະທູນຂໍພຣະເຈົ້າໃຫ້ທຳງານຜ່ານຕົວທ່ານ. ຈົ່ງບອກພຣະອົງວ່າ, “ພຣະຜູ້ເປັນເຈົ້າໃນມື້ນີ້ຂໍຊົງໃຊ້ຂ້ານ້ອຍໃຫ້ເປັນທີ່ພຣະພອນຕໍ່ຄົນອື່ນໆ. ຊ່ວຍຂ້ານ້ອຍໃຫ້ເປັນທູດຂອງພຣະອົງໃນມື້ນີ້.”
- **ຮຽນຮູ້ການແບ່ງປັນ.** ໂອ້ລົມກັບສິດຍາພິບານຂອງທ່ານຫຼືຜູ້ນຳໃນໂບດຂອງທ່ານເພື່ອຮຽນເອົາວິທີການແບ່ງປັນຂ່າວປະເສີດ.
- **ແບ່ງປັນ.** ຕັດສິນໃຈລິເລີ້ມການສົນທະນາເຣື່ອງຂ່າວປະເສີດໃນອາທິດນີ້. ຈົ່ງໝັ້ນໃນການບອກຄົນກ່ຽວກັບພຣະຄຣິດ.

ພຣະເຈົ້າໄດ້ອວຍພອນທ່ານໃຫ້ເປັນທີ່ພຣະພອນ. ພຣະເຈົ້າປະສົງຈະທຳງານຜ່ານຕົວທ່ານໃຫ້ເຫັນຣາຊອາຈັກຂອງພຣະອົງມາປາກົດ ແລະໃຫ້ແຜນການຂອງພຣະອົງສຳເຣັດໃນເຂດຄຸ້ມຂອງທ່ານ, ບ່ອນທຳງານ, ແລະເມືອງທີ່ທ່ານອາສັຍຢູ່. ທ່ານພ້ອມທີ່ຈະໄປບໍ່?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**